**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ 08 /ຫກ
ນະຄອນຫຼວງວຽງຈັນ, ວັນທີ 17 ກຸມພາ 2020

# ລະບຽບ
# ວ່າດ້ວຍການນຳໃຊ້ ແລະ ໃຫ້ເຊົ່າຫ້ອງປະຊຸມ, ຊັບສົມບັດ ແລະ ສະຖານທີ່ ຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ຢູ່ພາຍໃຕ້ການຄຸ້ມຄອງທະນາຄານແຫ່ງ ສປປ ລາວ

- ອີງຕາມຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຫ້ອງການ ທຫລ ສະບັບເລກທີ 06/ທຫລ ລົງວັນທີ 25 ມີນາ 2005;
- ອີງຕາມບົດບັນທຶກກອງປະຊຸມສ່ອງແສງສາຍລັດສະບັບເລກທີ 30/ທຫລ ລົງວັນທີ 18 ພະຈິກ 2019;
- ອີງຕາມການສະເໜີຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບສະບັບເລກທີ 53/ສຄຄຊ ລົງວັນທີ 03 ກຸມພາ 2020.

**ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ ອອກລະບຽບ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ລະບຽບສະບັບນີ້ກຳນົດ ຫຼັກການ ແລະ ລະບຽບການ ກ່ຽວກັບການນຳໃຊ້ ແລະ ໃຫ້ເຊົ່າ ຫ້ອງປະຊຸມ, ຊັບສົມບັດ ແລະ ສະຖານທີ່ຂອງສຳນັກງານຄະນະກຳມະການຄຸ້ມມຄອງຫຼັກຊັບ (ສຄຄຊ) ເຊິ່ງຢູ່ພາຍໃຕ້ການຄຸ້ມຄອງ ທຫລ ແນໃສ່ຮັບປະກັນໃຫ້ແກ່ການນຳໃຊ້, ການຄຸ້ມຄອງ, ການບຳລຸງຮັກສາ ໃຫ້ມີ ຄວາມເປັນລະບຽບ ຮຽບຮ້ອຍ ແລະ ເກີດປະໂຫຍດສູງສຸດ.

**ມາດຕາ 2 ອະທິບາຍຄຳສັບ**

1. **ຜູ້ເຊົ່າ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ພາກສ່ວນອື່ນ ທີ່ໄດ້ຮັບອະນຸຍາດເຊົ່າ ຫ້ອງປະຊຸມ, ຊັບສົມບັດ ແລະ ສະຖານທີ່ຂອງ ສຄຄຊ;
2. **ຊັບສົມບັດ** ໝາຍເຖິງ ໂຕະ, ຕັ່ງ ແລະ ອຸປະກອນນຳໃຊ້ຫ້ອງປະຊຸມ;
3. **ສະຖານທີ່** ໝາຍເຖິງ ພື້ນທີ່ໃນການເຊົ່າທີ່ຢູ່ໃນຂອບເຂດບໍລິເວນ ຕຶກ ສຄຄຊ.

**ມາດຕາ 3 ຂອບເຂດການນຳໃຊ້**

ລະບຽບສະບັບນີ້ນຳໃຊ້ສະເພາະບຸກຄົນ ຫຼື ນິຕິບຸກຄົນທີ່ນຳໃຊ້ ຫຼື ເຊົ່າຫ້ອງປະຊຸມ, ຊັບສົມບັດ ແລະ ສະຖານທີຂອງ ສຄຄຊ.

## ໝວດທີ 2
## ຂັ້ນຕອນການເຊົ່າຫ້ອງປະຊຸມ, ຊັບສິນບັດ ແລະ ສະຖານທີ່

**ມາດຕາ 4 ຂັ້ນຕອນການເຊົ່າຫ້ອງປະຊຸມ, ຊັບສິນບັດ ແລະ ສະຖານທີ່**

ຂັ້ນຕອນການເຊົ່າຫ້ອງປະຊຸມ, ຊັບສິນບັດ ແລະ ສະຖານທີ່ ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ບຸກຄົນ, ນິຕິບຸກຄົນ ຫຼື ພາກສ່ວນອື່ນ ທີ່ມີຈຸດປະສົງເຊົ່າຫ້ອງປະຊຸມ, ຊັບສິນບັດ ແລະ ສະຖານທີ່ ຕ້ອງສະເໜີຕໍ່ ສຄຄຊ ພ້ອມທັງລາຍລະອຽດທີ່ຕ້ອງການເຊົ່າຢ່າງເປັນລາຍລັກອັກສອນກ່ອນມື້ເຊົ່າ ສາມວັນລັດຖະການ;

2. ພາຍຫຼັງ ສຄຄຊ ໄດ້ຮັບໜັງສືສະເໜີຈາກ ຜູ້ທີ່ມີຈຸດປະສົງຕ້ອງການເຊົ່າ ສຄຄຊ ຈະພິຈາລະນາ ແລະ ແຈ້ງຕອບຢ່າງເປັນລາຍລັກອັກສອນພາຍໃນ ສອງ ວັນລັດຖະການ.

**ມາດຕາ 5 ການເຊົ່າສະຖານທີ່**

ກໍລະນີ ບຸກຄົນ, ນິຕິບຸກຄົນ ຫຼື ພາກສ່ວນອື່ນ ຕ້ອງການເຊົ່າສະຖານທີ່ ເພື່ອເປັນຫ້ອງການ ລາຍລະອຽດຂອງການເຊົ່າ ແມ່ນຈະກໍານົດໃນສັນຍາກ່ຽວກັບການເຊົ່າຕ່າງຫາກ.

**ມາດຕາ 6 ອັດຕາຄ່າເຊົ່າຫ້ອງປະຊຸມ, ຊັບສິນບັດ ແລະ ສະຖານທີ່**

ອັດຕາຄ່າເຊົ່າຫ້ອງປະຊຸມ, ຊັບສິນບັດ ແລະ ສະຖານທີ່ແຕ່ລະປະເພດແມ່ນກໍານົດໄວ້ໃນເອກະສານຊ້ອນທ້າຍທີ 1.

**ມາດຕາ 7 ການຊໍາລະຄ່າເຊົ່າຫ້ອງປະຊຸມ, ຊັບສິນບັດ ແລະ ສະຖານທີ່**

ຜູ້ເຊົ່າ ຕ້ອງຊໍາລະຄ່າເຊົ່າ ພາຍໃນ ສາມວັນ ພາຍຫຼັງສໍາເລັດການນໍາໃຊ້ຫ້ອງປະຊຸມ, ຊັບສິນບັດ ແລະ ສະຖານທີ່ດັ່ງກ່າວ ຊຶ່ງສາມາດຊໍາລະເປັນ ເງິນສົດ ຫຼື ເງິນໂອນກໍໄດ້.

ສໍາລັບ ລາຍລະອຽດຂອງການຊໍາລະຄ່າເຊົ່າສະຖານທີ່ ເພື່ອເປັນຫ້ອງການ ແມ່ນຈະກໍານົດໄວ້ໃນສັນຍາກ່ຽວກັບການເຊົ່າຕ່າງຫາກ.

**ມາດຕາ 8 ການປະຕິບັດຄ່າເຊົ່າຫ້ອງປະຊຸມ, ຊັບສິນບັດ ແລະ ສະຖານທີ່ ສຄຄຊ ຂອງບັນດາກົມທຽບກົມທີ່ຂຶ້ນກັບ ທຫລ**

ບັນດາກົມທີ່ຂຶ້ນກັບ ທະນາຄານແຫ່ງ ສປປ ລາວ ຈະໄດ້ຮັບການປະຕິບັດຄ່າເຊົ່າຫ້ອງປະຊຸມ, ຊັບສິນບັດ ແລະສະຖານທີ່ຂອງ ສຄຄຊ ບົນພື້ນຖານອັດຕານະໂຍບາຍ 50% ຂອງອັດຕາຄ່າເຊົ່າປົກກະຕິ.

**ມາດຕາ 9 ການປະຕິບັດພັນທະອາກອນ**

ຜູ້ເຊົ່າ ເປັນເຈົ້າການປະຕິບັດພັນທະອາກອນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 10 ການຄຸ້ມຄອງລາຍຮັບ**

ລາຍຮັບທີ່ໄດ້ຈາກການເຊົ່າ ຫ້ອງປະຊຸມ, ຊັບສິນບັດ ແລະ ສະຖານທີ່ແມ່ນໃຫ້ເປັນລາຍຮັບຂອງ ສຄຄຊ.

## ໝວດທີ 3
## ການຄຸ້ມຄອງ, ການກວດກາ ແລະ ການບໍາລຸງຮັກສາ

**ມາດຕາ 11 ການຄຸ້ມຄອງ**

ສຄຄຊ ເປັນເຈົ້າການ ໃນການຄຸ້ມຄອງ, ຕິດຕາມກວດກາ, ອໍານວຍຄວາມສະດວກໃນການນໍາໃຊ້ ແລະ ໃຫ້ເຊົ່າຫ້ອງປະຊຸມ, ຊັບສິນ ແລະ ສະຖານທີ່ຂອງ ສຄຄຊ, ຜູ້ເຊົ່າມີໜ້າທີ່ຮັກສາຄວາມສະອາດ, ຈັບງານບໍ່ໃຫ້ເປເພ່ເສຍຫາຍ ແລະ ຮັກສາສະພາບລວມຂອງສະຖານທີ່ຢູ່ໃນສະພາບການໃຊ້ງານປົກກະຕິ.

**ມາດຕາ 12 ການກວດກາ**

ກ່ອນ ແລະ ຫຼັງການໃຫ້ເຊົ່າຫ້ອງປະຊຸມ ແລະ ຊັບສິນບັດ, ສຄຄຊ ແລະ ຜູ້ເຊົ່າ ຕ້ອງກວດກາຊັບສິນບັດທຸກຄັ້ງ ເພື່ອໃຫ້ຮູ້ຈໍານວນ ແລະ ຄຸນນະພາບຂອງອຸປະກອນທີ່ໃຫ້ເຊົ່າ.

ກໍລະນີ ກວດກາຊັບສິນບັດ ຫາກພົບວ່າຊັບສິນບັດໃດໜຶ່ງມີການເປ່ເພ ຫຼື ເສຍຫາຍ ຜູ້ເຊົ່າຕ້ອງຮັບຜິດຊອບຕໍ່ຄວາມເສຍຫາຍດັ່ງກ່າວ.

**ມາດຕາ 13 ການບາລຸງຮັກສາ**

ສຄຄຊ ເປັນເຈົ້າການໃນການບໍາລຸງຮັກສາ ຫ້ອງປະຊຸມ, ຊັບສິນ ແລະ ສະຖານທີ່ ຂອງ ສຄຄຊ ໃຫ້ຢູ່ໃນສະພາບໃຊ້ງານເປັນປົກກະຕິ.

## ໝວດທີ 4
## ຂໍ້ຫ້າມ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 14 ຂໍ້ຫ້າມ**

ຫ້າມ ຜູ້ນໍາໃຊ້ ຫຼື ເຊົ່າ ຫ້ອງປະຊຸມ, ຊັບສິນບັດ ແລະ ສະຖານທີ່ ມີພຶດຕິກໍາໃດໜຶ່ງ ດັ່ງນີ້:

1. ເຄື່ອນຍ້າຍຊັບສັບສິນບັດ ຂອງ ສຄຄຊ ກໍລະນີມີຄວາມຈໍາເປັນເຄື່ອນຍ້າຍ ຕ້ອງຂໍອະນຸຍາດຈາກ ສຄຄຊ;
2. ນໍາເອົາຊັບສິນບັດ ສຄຄຊ ໄປເປັນຂອງສ່ວນຕົວ;
3. ນໍາໃຊ້ສະຖານທີ່ເປັນບ່ອນເຄື່ອນໄຫວທີ່ຜິດລະບຽບກົດໝາຍບ້ານເມືອງ.

**ມາດຕາ 15 ມາດຕະການຕໍ່ຜູ້ລະເມີດ**

ຜູ້ນໍາໃຊ້ ຫຼື ເຊົ່າ ຫ້ອງປະຊຸມ ທີ່ລະເມີດຂໍ້ຫ້າມຕາມທີ່ໄດ້ກໍານົດໄວ້ໃນມາດຕາ 14 ຂອງລະບຽບສະບັບນີ້ ຈະຖືກແຈ້ງເຕືອນ ແລະ ສຶກສາອົບຮົມ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 16 ການຈັດຕັ້ງປະຕິບັດ**

ສຄຄຊ ແລະ ຜູ້ນໍາໃຊ້ ຫຼື ເຊົ່າຫ້ອງປະຊຸມ, ຊັບສິນບັດ ແລະ ສະຖານທີ່ຂອງ ສຄຄຊ ແລະ ພາກສ່ວນອື່ນ ຈົ່ງຮັບຮູ້ ແລະ ປະຕິບັດລະບຽບການສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 17 ຜົນສັກສິດ**

ລະບຽບສະບັບນີ້ ມີຜົນສັກສິດນັບແຕ່ ວັນລົງລາຍເຊັນເປັນຕົ້ນໄປ

**ຫົວໜ້າຫ້ອງການ**

ເພັດສະຖາພອນ ແກ້ວວົງວິຈິດ

# ເອກະສານຊ້ອນທ້າຍທີ I

ອັດຕາຄ່າເຊົ່າຫ້ອງປະຊຸມ, ຊັບສິນບັດ ແລະ ສະຖານທີ່ສຳລັບພາກສ່ວນພາຍນອກຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ໃນນີ້ບໍ່ລວມຄ່ານ້ຳດື່ມ ແລະ ອາຫານຫວ່າງ) ລາຍລະອຽດດັ່ງນີ້:

| ລ/ດ | ເນື້ອໃນລາຍການ | ຈຳນວນຜູ້ເຂົ້າຮ່ວມ (ຄົນ) | ອັດຕາຄ່າເຊົ່າເຄິ່ງວັນ (ກີບ) | ອັດຕາຄ່າເຊົ່າຕໍ່ວັນ (ກີບ) | ອຸປະກອນ | ໝາຍເຫດ |
|---|---|---|---|---|---|---|
| I | ຄ່າເຊົ່າຫ້ອງປະຊຸມ | | | | | |
| 1 | ຫ້ອງດອກຝາງແດງ (204) | 5-10 | 300.000 | 500.000 | | |
| 2 | ຫ້ອງດອກບົວ (208) | 10-16 | 450.000 | 800.000 | LCD Projector | |
| 3 | ຫ້ອງດອກດາວເຮືອງ (308) | 10-16 | 300.000 | 550.000 | | |
| 4 | ຫ້ອງດອກຮັກ (513) | 19-25 | 550.000 | 1.000.000 | ເຄື່ອງສຽງ | |
| 5 | ຫ້ອງດອກຄູນ (505) | 25-39 | 1.000.000 | 2.000.000 | ອຸປະກອນຮັບໃຊ້ຫ້ອງປະຊຸມຄົບຊຸດ | |
| 6 | ຫ້ອງດອກຈຳປາ (602) | 40-100 | 2.500.000 | 3.500.000 | ອຸປະກອນຮັບໃຊ້ຫ້ອງປະຊຸມຄົບຊຸດ | |
| 7 | ຫ້ອງຮັບແຂກ VIP (ຊັ້ນ 6) | 8-12 | 150.000 | 300.000 | | |
| II | ຄ່າເຊົ່າຊັບສິນບັດ | | | | | |
| 1 | Projector | | 150.000 | 200.000 | (ລວມ LCD) | |
| 2 | Computer | | 100.000 | 150.000 | | |
| | | | | | | |

| III | ຄ່າເຊົ່າຫ້ອງບັນຈຸຖານຂໍ້ມູນ ຂອງ ສຄຄຊ | | | |
|---|---|---|---|---|
| ລ/ດ | ເນື້ອໃນລາຍການ | ຂະໜາດ | ອັດຕາ (ກີບ)/ເດືອນ | ອັດຕາ (ກີບ)/ປີ |
| 1 | ພື້ນທີ່ຕູ້ແຮັກ | 1U/300W | 550.000 | 6.050.000 |
| 2 | ພື້ນທີ່ຕູ້ແຮັກ | 2U/500W | 1.000.000 | 11.000.000 |
| 3 | ພື້ນທີ່ຕູ້ແຮັກ | 4U/1.000W | 1.800.000 | 19.800.000 |
| 4 | ພື້ນທີ່ຕູ້ແຮັກ | Rack /1.500W | 2.000.000 | 24.000.000 |
| 5 | ພື້ນທີ່ຕູ້ແຮັກ | Full Rack/3.000W | 5.000.000 | 60.000.000 |
| IV | ຄ່າເຊົ່າຫ້ອງເກັບເຄື່ອງຂອງ ສຄຄຊ | | | |
| 1 | ອຸປະກອນ ແລະ ອື່ນໆ | 1 ຕາແມັດ | 120.000 | 1.000.000 |

ໝາຍເຫດ: ອັດຕາຄ່າເຊົ່າຫ້ອງປະຊຸມ, ຊັບສິນບັດ ແລະ ສະຖານທີ ສໍາລັບບັນດາກົມ/ທຽບເທົ່າກົມ ທີ່ຂຶ້ນກັບ ທຫລ ຈະໄດ້ຮັບປະຕິບັດນະໂຍບາຍສ່ວນຫຼຸດ 50% ຂອງອັດຕາປົກກະຕິ (ບໍ່ລວມຄ່າເຊົ່າສະຖານທີ່ເຮັດວຽກໄລຍະຍາວ)